THIPPHAPHONE et al. (2021). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 7. Issue 2. July – December 2021. Page 209 - 216

# ການພັດທະນາການຮຽນ-ການສອນ ວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນ ສຳລັບນັກສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ

**ກິນນາລີ ທິບພະພອນ[1], ສົມໝາຍ ສີລີວັນ[2], ສີປະເສີດ ປານຟອງເພັດ[3] ແລະ ພັນທະມານັດ ປະທຸມວັນ[4]**

*ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ, ສປປ ລາວ*

*[1] ຕິດຕໍ່ພົວພັນ:*
*ກິນນາລີ ທິບພະພອນ, ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ, ເບີໂທ: +856 20 5537 7724,*
E-mail: kinnaky8888@gmail.com
*[2] ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ, ມະຫາວິທະຍາໄລສຸພານຸວົງ*
*[3,4] ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ*

***ຂໍ້ມູນບົດຄວາມ:***
*ການສົ່ງບົດຄວາມ: 11 ກັນຍາ 2021*
*ປັບປຸງສຳເລັດ: 03 ຕຸລາ 2021*
*ການຕອບຮັບ: 29 ຕຸລາ 2021*

**ບົດຄັດຫຍໍ້**

ບົດຄົ້ນຄວ້າຄັ້ງນີ້ແມ່ນຄົ້ນຄວ້າກ່ຽວກັບການພັດທະນາການຮຽນ-ການສອນ ວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນ ສຳລັບນັກສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ, ເຊິ່ງມີຈຸດປະສົງ ເພື່ອສ້າງຊຸດການສອນວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນ, ເພື່ອຫາປະສິດທິພາບຂອງ ບົດສອນຕາມເກນ 85/85, ພ້ອມທັງສຶກສາຜົນການຮຽນ ແລະ ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການຮຽນ-ການສອນ ໂດຍນຳໃຊ້ Video ຊ່ວຍສອນ, ເຊິ່ງປະຊາກອນ ແມ່ນນັກສຶກສາ ປີທີ 2 ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ. ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນຫ້ອງ 2CH ລວມທັງໝົດ 19 ຄົນ. ໃນນັ້ນເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າປະກອບມີ: ບົດສອນຈຳນວນ 10 ບົດ, ແຕ່ລະບົດສອນໃຊ້ເວລາ 90 ນາທີ, ມີ Video ປະກອບການສອນຈຳນວນ 30 ຫົວຂໍ້, ແບບທົດສອບຍ່ອຍ, ແບບທົດສອບຫຼັງ ແລະ ແບບສອບຖາມຄວາມເພິ່ງພໍຕໍ່ກັບການຈັດການຮຽນ-ການສອນ ໂດຍນຳໃຊ້ Video ປະກອບການສອນ ແລະ ໄດ້ນຳເຄື່ອງມືປະກອບການສອນດັ່ງກ່າວຜ່ານຜູ້ຊ່ຽວຊານ ເພື່ອກວດສອບຄຸນນະພາບຂອງເຄື່ອງມື ເຫັນວ່າມີດັດສະນີຄວາມສອດຄ່ອງ (IOC) ມີຄ່າຢູ່ລະຫວ່າງ 0.66 ເຖິງ 1.00 ແລະ ມີຄ່າຄວາມເຊື່ອໝັ້ນຂອງແບບສອບຖາມ 83.40%.

ຜົນການຄົ້ນຄວ້າ ພົບວ່າ ສ້າງຊຸດການສອນໄດ້ 1 ຊຸດ ເພື່ອປະກອບເຂົ້າໃນການສອນວິຊາຄອມພິວເຕີພື້ນຖານ (Microsoft Excel 2013), ບົດສອນວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນ ສຳລັບນັກສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ມີຄ່າປະສິດທິພາບເທົ່າກັບ 86.89/90.00 ສູງກວ່າເກນທີ່ຕັ້ງໄວ້ຄື 85/85, ຜົນສຳເລັດທາງການຮຽນຂອງນັກສຶກສາໃນຈັດການຮຽນ-ການສອນ ວິຊາ ຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນເຫັນວ່າ ນັກສຶກສາມີຜົນການຮຽນໂດຍສະເລ່ຍຢູ່ໃນລະດັບດີເລີດ ແລະ ນັກສຶກສາມີຄວາມເພິ່ງພໍໃຈຕໍ່ກັບການຈັດການຮຽນ-ການສອນ ວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນ ສຳລັບນັກສຶກສາ ຄະນະສຶກສາສາດ ໂດຍລວມມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ.

**ຄຳສັບສຳຄັນ:** *ການສອນ, ການຮຽນ, ວິດີໂອ*

# Development of Basic Computer Subjects in Teaching and Learning by Using Video for Students at Faculty of Education, Souphanouvong University

**Kinnaly THIPPHAPHONE[1], Sommay SILIVANH[2], Sipaseuth PANFONGPHET[3] and Phanthamanath PHATHOUMVANH[4]**

*Faculty of Education, Souphanouvong University, Lao PDR*

*[1]**Correspondence:** Kinnaly THIPPHAPHONE, Faculty of Education, Souphanouvong University, Tel: +856 20 5537 7724, E-mail: kinnaky8888@gmail.com*
*[2] Research and Academic Services Office, Souphanouvong University*
*[3,4] Faculty of Education,*

***Article Info:***
*Submitted: Sep 11, 2021*
*Revised: Oct 03, 2021*
*Accepted: Oct 29, 2021*

**Abstract**

This research is to study the development of basic computer Subject in teaching and learning by using video for students at Faculty of Education, Souphanouvong University, the objectives of this research are to create teaching aids for basic computer subject by using video, to study the efficiency of teaching plans which was based on the criteria of 85/85, to study students learning outcomes and to study the students' satisfaction with teaching and learning by using video, The sample group selected for this study was one class, which consisted of 19 students, class 2CH.

The instruments of this research consisted of 10 teaching plans with 90 minutes each, there were 30 topics of video for teaching. Sub-test, post-test and satisfaction questionnaires were used to evaluate the quality of teaching by using video and instruments were marked by experts to evaluate the quality of questions, and the Index of Item Objective (IOC) ranged from 0.66 to 1.00 and the reliability of questionnaires was 83.40%.

The research results were as follows: teaching aid were created in one series of videos for teaching basic computer (Microsoft Excel 2013), teaching plans for teaching basic computers by using videos for students at Faculty of Education, Souphanouvong University were 86.89/90.00 which was higher than the criteria set at 85/85, the effectiveness index value of students coming from videos for learning basic computers was at an excellent level, and students were satisfied with teaching and learning basic computers by using video for students at the Faculty of Education was at a high level.

**Keywords**: *Teaching, Learning, Video.*

## 1. ພາກສະເໜີ

ສັດຕະວັດທີ XXI ເປັນຍຸກໂລກາພິວັດ, ຍຸກແຫ່ງຂໍ້ມູນຂ່າວສານ ການປະຕິວັດວິທະຍາສາດ-ເຕັກໂນໂລຊີ ມີລັກສະນະກ້າວກະໂດດ ເຊິ່ງມີຄວາມສຳຄັນໃຫຍ່ຫຼວງຕໍ່ການປ່ຽນແປງວິຖີຊີວິດຂອງສັງຄົມມະນຸດ ທ່າອ່ຽງລວມຂອງການພັດທະນາເສດຖະກິດ-ສັງຄົມທີ່ມີການອີງໃສ່ທຳມະຊາດນັ້ນຈະຖືກລຸດຜ່ອນລົງ ແຕ່ຈະອີງໃສ່ມັນສະໝອງ ແລະ ສະຕິປັນຍາຂອງຄົນເປັນສິ່ງທີ່ສຳຄັນ ດັ່ງນັ້ນ, ໃນບັນດາປະເທດໃນໂລກຈຶ່ງສຸມໃສ່ພັດທະນາຊັບພະຍາກອນມະນຸດໂດຍຖືເອົາວຽກງານການສຶກສາເປັນປັດໃຈຕົ້ນຕໍໃນການສ້າງສັງຄົມໃຫ້ມີຄວາມຮູ້, ຄຸນສົມບັດ ແລະ ມີຄວາມຈະເລີນທາງດ້ານຈິດໃຈສາມາດນຳໃຊ້ວິທະຍາສາດ ແລະ

ເຕັກໂນໂລຊີເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ (ກະຊວງສຶກສາທິການ, 2001, ໜ້າທີ 15).

ສັງຄົມປັດຈຸບັນເທັກໂນໂລຊີຂໍ້ມູນຂ່າວສານໄດ້ມີບົດບາດຢ່າງລວງຫຼາຍຕໍ່ການດໍາລົງຊີວິດ ເຮັດໃຫ້ເກີດການຕິດຕໍ່ສື່ສານ ການແລກປ່ຽນຂໍ້ມູນຄວາມຮູ້, ແນວຄິດ ຕະຫຼອດຮອດການເຜີຍແຜ່ປະສົບການຜ່ານສື່ໄດ້ຢ່າງວ່ອງໄວ ການສຶກສາກໍ່ເປັນລະບົບໜຶ່ງທີ່ໄດ້ປະໂຫຍດຈາກເທັກໂນໂລຊີເຫຼົ່ານີ້ (ສຸວັນນ້ອຍ, 2548, ໜ້າທີ 40) ແລະ ເມື່ອສັງຄົມມີການປ່ຽນແປງໄປສູ່ຍຸກແຫ່ງເທັກໂນໂລຊີຂໍ້ມູຂ່າວສານ ໂດຍອາໄສສື່ທີ່ເຊື່ອມໂຍງເຂົ້າຫາກັນ. ດັ່ງນັ້ນ, ການຮຽນຮູ້ຈຶ່ງຕ້ອງມີການປ່ຽນແປງ ບໍ່ແມ່ນອາໄສແຕ່ພຽງຕໍາລາ ແລະ ຫ້ອງຮຽນເທົ່ານັ້ນ ຜູ້ຮຽນສາມາດຄົ້ນຄວ້າເພີ່ມດ້ວຍຕົນເອງໄດ້ໂດຍອາໄສເທັກໂນໂລຊີ.

ໃນນັ້ນ ຄອມພິວເຕີ ຖືວ່າຈັດຢູ່ໃນເທັກໂນໂລຊີຂໍ້ມູນຂ່າວສານ ທີ່ເຂົ້າມາມີບົດບາດສໍາຄັນກັບທຸກວົງການ ບໍ່ວ່າຈະເປັນທາງດ້ານທຸລະກິດ, ອຸດສາຫະກໍາ, ທະນາຄານ, ການແພດ ແລະ ວົງການ ການສຶກສາ ຖືວ່າ ຄອມພິວເຕີມີຄວາມສໍາຄັນໃນການພັດທະນາ ແລະ ກຽມຄວາມພ້ອມຂອງຜູ້ຮຽນເຂົ້າສູ່ສັງຄົມໃນອະນາຄົດ. ໃນນັ້ນວິຊາຄອມພິວເຕີພື້ນຖານ ຖືວ່າເປັນວິຊາໜຶ່ງທີ່ມີຄວາມສໍາຄັນ ເປັນພື້ນຖານໃຫ້ແກ່ການນໍາໄປສູ່ການນໍາໃຊ້ເທັກໂນໂລຊີຂໍ້ມູນຂ່າວສານໃນລະດັບທີ່ສູງກວ່າ ໂດຍມີຄວາມຄາດຫວັງໃຫ້ຜູ້ຮຽນໄດ້ຮຽນຮູ້ຄອມພິວເຕີພື້ນຖານ ແລະ ສາມາດພັດທະນາຕົນເອງໃຫ້ເກີດການຮຽນຮູ້ທີ່ຍັ້ງຢືນ, ສາມາດສືບຄົ້ນຫາຄວາມຮູ້ຈາກແຫຼ່ງຕ່າງໆ ແລະ ສາມາດໃຊ້ຄອມພິວເຕີໃນຊີວິດປະຈໍາວັນຢ່າງມີປະສິດທິພາບ.

ຈາກປະສົບການຕົວຈິງໃນການຈັດການຮຽນ-ການສອນວິຊາຄອມພິວເຕີທີ່ຜ່ານມາ ເຫັນວ່າຍັງມີນັກສຶກສາສ່ວນຫຼາຍໃຊ້ທັກສະພື້ນຖານໃນການພິມ, ການໃຊ້ຄໍາສັ່ງຕ່າງໆ, ການປະຕິບັດກິດຈະກໍາ, ບົດເຝິກຫັດບໍ່ໄດ້ດີເທົ່າທີ່ຄວນ ເຮັດໃຫ້ການສິດສອນພົບຄວາມຫຍຸ້ງຍາກ ຕ້ອງໄດ້ໃຊ້ເວລາທວນຄືນຄວາມຮູ້ເດີມທີ່ຜ່ານມາ ແລະ ການສອນຕ້ອງໄດ້ໃຊ້ເວລາອະທິບາຍຫຼາຍຄັ້ງໃນການໃຊ້ຄໍາສັ່ງໃດໜຶ່ງເຮັດໃຫ້ພົບຄວາມຫຍຸ້ງຍາກ ເພາະນັກສຶກສາຈື່ຂັ້ນຕອນຕ່າງໆ ບໍ່ໄດ້ດີ ແລະ ຂາດຕໍາລາຮຽນເນື່ອງຈາກບັນດາ Office ແມ່ນໄດ້ພັດທະນາຢ່າງວ່ອງໄວເຮັດໃຫ້ການສ້າງຕໍາລາພົບຄວາມຫຍຸ້ງຍາກ. ເຊິ່ງ Video ຊ່ວຍສອນ ຫຼື ເອີ້ນວ່າ (VAI = Video Assisted Instruction) ຄືສື່ມັນຕິມີເດຍ ຫຼື ສື່ປະສົມທີ່ໃຊ້ນໍາສະເໜີລາຍລະອຽດແຕ່ລະບົດຮຽນ, ສາມາດໃຊ້ເປັນສື່ປະກອບການຮຽນ-ການສອນ, ເຮັດໃຫ້ຜູ້ຮຽນສາມາດສຶກສາດ້ວຍຕົນເອງໄດ້ ແລະ ເມື່ອນັກສຶກສາຕິດຕາມການສອນຂອງຄູບໍ່ທັນສາມາດເບິ່ງ Video ຊ່ວຍສອນ ເພີ່ມເຕີມນອກຈາກເວລາຮຽນໄດ້, ເຮັດໃຫ້ຜູ້ຮຽນເຫັນພາບ ແລະ ຂັ້ນຕອນຕ່າງໆຈາກວິດີໂອໄດ້ຢ່າງຊັດເຈນ ສາມາດປະຕິບັດໄປນໍາໄດ້ ແລະ ເນື່ອງຈາກການທົບທວນການປະຕິບັດຕາມຫຼາຍໆຄັ້ງ ກໍ່ຈະສາມາດເຮັດໃຫ້ຜູ້ຮຽນຈື່ຈໍາບົດຮຽນໄດ້ດີຈົນເກີດປະສົບການ ແລະ ຄວາມຊໍານານໃນການໃຊ້ຕົວຈິງ. ດັ່ງນັ້ນ, ຄະນະຜູ້ວິໄຈຈຶ່ງມີຄວາມສົນໃຈກ່ຽວກັບການພັດທະນາການຮຽນ-ການສອນ ວິຊາຄອມພິວເຕີພື້ນຖານ ໂດຍນໍາໃຊ້ Video ຊ່ວຍສອນ ສໍາລັບນັກນຶກສາເພື່ອເຮັດໃຫ້ຜູ້ຮຽນເກີດການຮຽນຮູ້ຢ່າງມີປະສິດທິພາບ, ສາມາດປະຕິບັດຕົວຈິງ ແລະ ນໍາໃຊ້ເຂົ້າໃນຊີວິດຕົວຈິງໄດ້.

ຈຸດປະສົງຂອງການຄົ້ນຄວ້າໃນຄັ້ງນີ້ 1). ເພື່ອສ້າງຊຸດການສອນວິຊາຄອມພິວເຕີພື້ນຖານ ໂດຍນໍາໃຊ້ Video ຊ່ວຍສອນ ສໍາລັບນັກສຶກສາ ປີທີ 2 ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ, 2). ເພື່ອຫາປະສິດທິພາບຂອງບົດສອນ ວິຊາຄອມພິມເຕີ ໂດຍນໍາໃຊ້ Video ຊ່ວຍສອນ ສໍາລັບນັກສຶກສາ ປີທີ 2 ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ຕາມເກນ 85/85, 3). ເພື່ອສຶກສາຜົນການຮຽນ ວິຊາຄອມພິວເຕີພື້ນຖານ ໂດຍນໍາໃຊ້ Video ຊ່ວຍສອນ ສໍາລັບນັກສຶກສາ ປີທີ 2 ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ແລະ 4). ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການຮຽນ-ການສອນວິຊາຄອມພິວເຕີພື້ນຖານ ໂດຍນໍາໃຊ້ Video ຊ່ວຍສອນ.

## 2. ອຸປະກອນ ແລະ ວິທີການ

**2.1 ກຸ່ມເປົ້າໝາຍ**

ກຸ່ມເປົ້າໝາຍ ທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ແມ່ນໄດ້ມາຈາກປະຊາກອນ ຈຳນວນ 1 ຫ້ອງ, ຫ້ອງ 2CH ລວມທັງໝົດ 19 ຄົນ.

**2.2 ຂອບເຂດດ້ານເນື້ອໃນ**

ເນື້ອໃນທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນ ວິຊາຄອມພິວເຕີພື້ນຖານ 3: Microsoft Excel 2013

**2.3 ຂອບເຂດດ້ານຕົວປ່ຽນ**

**2.3.1 ຕົວປ່ຽນຕົ້ນ**

- Video ຊ່ວຍສອນ

**2.3.2 ຕົວປ່ຽນຕາມ**

- ປະສິດທິພາບຂອງ ບົດສອນວິຊາຄອມພິມເຕີ ໂດຍນຳໃຊ້ Video ຊ່ວຍສອນ.

- ຜົນການຮຽນວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ບົດຮຽນຊ່ວຍສອນ.

- ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການຮຽນ-ການສອນ ວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນ.

**2.4 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ**

- ບົດສອນວິຊາຄອມພິວເຕີພື້ນຖານ ແລະ Video ຊ່ວຍສອນ

- ແບບທົດສອບຍ່ອຍ ແລະ ແບບທົດສອບຫຼັງຮຽນ

- ແບບສອບຖາມຄວາມເພິ່ງພໍໃຈ

**2.5 ການສ້າງ ແລະ ກວດສອບຄຸນນະພາບຂອງເຄື່ອງມື**

1. ສຶກສາໂຄງສ້າງຫຼັກສູດ, ເນື້ອໃນວິຊາທີ່ຈະສອນ ແລະ ວິທີສິດສອນ.

2. ສຶກສາບັນດາໂປຼແກຼມທີ່ຈະໃຊ້ເຂົ້າໃນການສ້າງ Video ຊ່ວຍສອນ.

3. ລົງມືສ້າງບົດສອນ, ບົດທົດສອບ ພ້ອມທັງປະກອບການສອນ.

4. ນຳເຄື່ອງມືທີ່ສ້າງຜ່ານຜູ້ຊ່ຽວຊານ 3 ທ່ານ ເພື່ອກວດສອບຄວາມຖືກຕ້ອງທາງດ້ານເນື້ອໃນມີຄວາມສອດຄ່ອງກັບໂຄງສ້າງຫຼັກສູດ, ຈຸດປະສົງ ແລະ Video ທີ່ສ້າງຂຶ້ນມີຄວາມເໝາະສົມທາງດ້ານເນື້ອໃນ, ພາບ ແລະ ສຽງ ແລະ ຫາດັດສະນີຄວາມສອດຄ່ອງ ຫຼື IOC ແລະ ພົບວ່າດັດສະນີຄວາມສອດຄ່ອງມີຄ່າຢູ່ລະຫວ່າງ 0.66 ເຖິງ 1.00 ຖືວ່າ ມີຄວາມສອດຄ່ອງຢູ່ໃນເກນທີ່ຍອມຮັບໄດ້ (ບຸນຊົມ ສີສະອາດ, 2011, ໜ້າທີ 71).

5. ນຳບົດສອນທີ່ສ້າງຂຶ້ນໄປປັບປຸງຕາມຄຳແນະນຳ ແລະ ນຳໄປໃຊ້ກັບກຸ່ມຕົວຢ່າງ.

6. ແລະ ພົບວ່າບົດສອນທີ່ສ້າງຂຶ້ນມີຄ່າປະສິດທິພາບຂອງບົດສອນແມ່ນ $E_1/E_2 = 86.35/90.70$ ເຊິ່ງສູງກວ່າເກນທີ່ຕັ້ງໄວ້.

7. ຈັດພິມເປັນສະບັບສົມບູນ ເພື່ອນຳໄປສອນກັບກຸ່ມເປົ້າໝາຍ.

**2.6 ວິທີເກັບກຳ ແລະ ຮອບຮວມຂໍ້ມູນ**

1. ດຳເນີນການຈັດການຮຽນ-ການສອນໂດຍນຳໃຊ້ບົດສອນ ແລະ ສື່ການສອນທີ່ສ້າງຂຶ້ນ ຕາມແຜນການທີ່ໄດ້ກຳ ນົດໄວ້ໃນບົດສອນ.

2. ໃນລະຫວ່າງດຳເນີນການສອນ ນັກສຶກສາຈະໄດ້ປະຕິບັດກິດຈະກຳ ພ້ອມທັງທົດສອບຄວາມຮູ້ຂອງນັກສຶກສາໄປພ້ອມ.

3. ເມື່ອສຳເລັດຕາມໄລຍະເວລາທີ່ໄດ້ກຳນົດໃນບົດສອນແລ້ວ ໄດ້ທົດສອບຄວາມຮູ້ທັງໝົດຫຼັງການຈັດການຮຽນ-ການສອນ.

4. ຫຼັງຈາກສຳເຫຼັດການຈັດການຮຽນ-ການສອນແລ້ວ ໄດ້ຂໍເວລານຳນັກສຶກສາ ເພື່ອໃຫ້ນັກສຶກສາຕອບແບບສອບຖາມຄວາມເພິ່ງພໍໃຈຕໍ່ກັບການສອນໂດຍໃຊ້ Video ປະກອບເຂົ້າໃນການສອນ.

**2.7 ວິທີການວິເຄາະຂໍ້ມູນ**

1. ນຳຄະແນນທີ່ໄດ້ຈາກແບບທົດຍ່ອຍ ແລະ ແບບທົດສອບຫຼັງຮຽນ ມາຄິດໄລ່ຫາປະສິດທິພາບຂອງບົດສອນ $(E_1/E_2)$.

2. ນຳຄະແນນຈາກແບບທົດສອບຫຼັງຮຽນໄປວິເຄາະຫາຄ່າ ເປີເຊັນ (%) ແລ້ວນຳໄປທຽບກັບເກນທີ່ຕັ້ງໄວ້

3. ນຳຄະແນນທີ່ໄດ້ຈາກແບບສອບຖາມຄວາມເພິ່ງ

ພໍໃຈຕໍ່ກັບການຈັດການຮຽນ-ການສອນ ວິຊາຄອມພິວເຕີພື້ນຖານ ໂດຍໃຊ້ Video ຊ່ວຍສອນ ຫາຄ່າສະເລ່ຍ ($\bar{X}$), ຄ່າຜັນປ່ຽນມາດຖານ (S.D) ໂດຍທຽບໃສ່ເກນການປະເມີນດັ່ງນີ້:

| ຄ່າສະເລ່ຍ | ການແປຄວາມໝາຍ |
|---|---|
| 4.51 - 5.00 | ມີຄວາມເພິ່ງພໍໃຈຫຼາຍທີ່ສຸດ |
| 3.51 - 4.50 | ມີຄວາມເພິ່ງພໍໃຈຫຼາຍ |
| 2.51 - 3.50 | ມີຄວາມເພິ່ງພໍໃຈປານກາງ |
| 1.51 - 2.50 | ມີຄວາມເພິ່ງພໍໃຈໜ້ອຍ |
| 1.00 - 1.50 | ມີຄວາມເພິ່ງພໍໃຈໜ້ອຍທີ່ສຸດ |

(ທານິນ ສີລະປະຈາລຸ, 2012, ໜ້າທີ 341)

## 3. ຜົນໄດ້ຮັບ

### 3.1 ປະສິດທິພາບຂອງບົດສອນ ($E_1/E_2$)

ຈາກການທົດສອບນັກສຶກສາຈຳນວນ 19 ຄົນ ພົບວ່າ ຜົນການທົດສອບຄັ້ງທີ 1 ມີຄະແນນລວມທັງໝົດ 1,560 ຄະແນນ, ຄິດເປັນເປີເຊັນແມ່ນ 82.10% ຖ້າທຽບໃສ່ຄະແນນເຕັມ 1,900 ຄະແນນ, ຜົນການທົດສອບຄັ້ງທີ 2 ມີຄະແນນລວມທັງໝົດ 1,742 ຄະແນນ, ຄິດເປັນເປີເຊັນແມ່ນ 91.68% ຖ້າທຽບໃສ່ຄະແນນເຕັມ 1,900 ຄະແນນ ເມື່ອສະເລ່ຍການທົດສອບຍ່ອຍທັງ 2 ຄັ້ງ ຄິດເປັນເປີເຊັນແມ່ນ 86.89% ໝາຍຄວາມວ່າ $E_1$ ເທົ່າກັບ 86.89% ($E_1$=86.89%) ແລະ ໃນນັ້ນເຫັນວ່າຜົນການທົດສອບຄະແນນຫຼັງຮຽນ ມີຄະແນນລວມທັງໝົດແມ່ນ 1,710 ຄະແນນ, ຄິດເປັນເປີເຊັນແມ່ນ 90.00% ຖ້າທຽບໃສ່ຄະແນນເຕັມ 1,900 ຄະແນນ, ໝາຍຄວາມວ່າ $E_2$ ເທົ່າກັບ 90.00% ($E_2$=90.00%). ສະແດງວ່າປະສິດທິພາບຂອງບົດສອນ $E_1/E_2$ ເທົ່າກັບ 86.89/90.00 ເຊິ່ງສູງກວ່າເກນທີ່ກຳນົດໄວ້ຄື 80/80. ດັ່ງໃນຕາຕະລາງ 1.

### 3.2 ຜົນການຮຽນ

ຄ່າສະເລ່ຍຂອງຄະແນນການທົດສອບຜົນການຮຽນວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນຂອງນັກສຶກສາຈຳນວນ 19 ຄົນ ໂດຍໃຊ້ການທົດສອບ 3 ຄັ້ງ ມີຄະແນນສະເລ່ຍລວມທັງໝົດແມ່ນ 87.93 ຄະແນນ, ຕົກຢູ່ໃນລະດັບຄະແນນດີເລີດ. ສະນັ້ນ, ຈຶ່ງສະຫຼຸບໄດ້ວ່າຜົນການຮຽນໂດຍນຳໃຊ້ Video ຊ່ວຍສອນແມ່ນມີຜົນການຮຽນໃນລະດັບດີຖ້າທຽບໃສ່ສົມມຸດຖານທີ່ກຳນົດໄວ້ດັ່ງໃນຕາຕະລາງ 2.

### 3.3 ວິເຄາະແບບສອບຖາມຄວາມເພິ່ງພໍໃຈ

ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນ ວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນ ມີຄ່າສະເລ່ຍລວມແມ່ນ $\bar{X} = 4.08$ ຄະແນນ, ຄ່າຜັນປ່ຽນມາດຖານແມ່ນ $S.D = 0.84$ ເຊິ່ງຕົກຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍ ແລະ ສາມາດສະຫຼຸບເປັນລາຍຂໍ້ຄື: ນັກສຶກສາມີຄວາມເພິ່ງພໍໃຈຫຼາຍທີ່ສຸດແມ່ນການສອນໂດຍນຳໃຊ້ Video ຊ່ວຍສອນ ເຮັດໃຫ້ຜູ້ຮຽນໄດ້ຄົ້ນຫາຄວາມຮູ້ດ້ວຍຕົນເອງ, ຕໍ່ມາແມ່ນນັກສຶກສາມີຄວາມເພິ່ງພໍໃຈຫຼາຍ ແມ່ນການສອນໂດຍນຳໃຊ້ Video ຊ່ວຍສອນ ສາມາດເປັນສື່ການຮຽນເພີ່ມເຕີມນອກໂມງຮຽນໄດ້, ຜູ້ຮຽນສາມາດເຂົ້າເຖິງບົດຮຽນໄດ້ງ່າຍ ແລະ ສະດວກເມື່ອຕິດຕາມການສອນບໍ່ທັນ, ຜູ້ຮຽນສາມາດຈື່ຈຳບົດຮຽນໄດ້ດີ, ສາມາດສະໜອງຜົນຄວາມກ້າວໜ້າທາງການຮຽນຂອງຜູ້ຮຽນເປັນລາຍບຸກຄົນໄດ້ ແລະ ການສອນໂດຍນຳໃຊ້ Video ຊ່ວຍໃຫ້ຜູ້ຮຽນເກີດຄວາມເຂົ້າໃຈໄດ້ດີ.

## 4. ວິພາກຜົນ

ບົດສອນວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນ ສຳລັບນັກສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ມີຄ່າປະສິດທິພາບເທົ່າກັບ 86.89/90.00 ສູງກວ່າເກນທີ່ຕັ້ງໄວ້ຄື 85/85 ໝາຍຄວາມວ່າ ນັກສຶກສາໄດ້ຄະແນນສະເລ່ຍຈາກການເຮັດກິດຈະກຳຄິດເປັນເປີເຊັນແມ່ນ 86.89 ແລະ ໄດ້ຄະແນນສະເລ່ຍຈາກການທົດສອບວັດຜົນສຳເລັດທາງການຮຽນພາຍຫຼັງທີ່ຈົບຄິດເປັນເປີເຊັນ 90.00 ສະແດງວ່າການຈັດການຮຽນ-ການສອນ ໂດຍນຳໃຊ້ Video ຊ່ວຍສອນທີ່ສ້າງຂຶ້ນມີປະສິດທິພາບສູງກວ່າເກນ 85/85 ເຊິ່ງໃນນີ້ເຫດຜົນທີ່ເຮັດໃຫ້ບົດສອນມີປະສິດທິພາບສູງຍ້ອນວ່າ ບົດສອນທີ່ສ້າງຂຶ້ນມີ

ຂະບວນການສ້າງຕາມຂັ້ນຕອນຢ່າງເປັນລະບົບໂດຍໄດ້ສຶກສາຫຼັກສູດ ມີການວິເຄາະຫຼັກສູດ ແລະ ເນື້ອໃນທີ່ຈະສອນບວກກັບສຶກສາຂັ້ນຕອນຕ່າງໆໃນການສ້າງເຄື່ອງມື ຈາກນັ້ນຈຶ່ງລົງມືແຕ່ງບົດສອນ ແລະ ນຳບົດສອນດັ່ງກ່າວສະເໜີຜ່ານຜູ້ຊ່ຽວຊານເພື່ອພິຈາລະນາກວດສອບຄວາມເໝາະສົມທາງດ້ານເນື້ອໃນ, ສື່ການສອນ, ກິດຈະກຳ ແລະ ຂະບວນການວັດ ແລະ ປະເມີນຜົນ ຕະຫຼອດຮອດເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ, ຈຶ່ງເປັນສາເຫດເຮັດໃຫ້ນັກສຶກສາເກີດການຮຽນຮູ້ຢ່າງເໝາະສົມ ແລະ ມີຜົນສຳເລັດທາງການຮຽນສູງເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ ໂພທິພິລົມ (2017) ກ່າວວ່າ ການພັດທະນາບົດຮຽນຄອມພິວເຕີຊ່ວຍສອນທີ່ເນັ້ນເນື້ອໃນອາຊີບ ເພື່ອພັດທະນາທັກສະການອ່ານພາສາອັງກິດເພື່ອຄວາມເຂົ້າໃຈ ສຳລັບນັກຮຽນຊັ້ນມັດທະຍົມສຶກສາ ປີທີ 1 ໂຮງຮຽນເບັນຈັມມາລາຊູທິດ ລາດຊະບູລີ ແຂວງລາດຊະບູລີ ພົບວ່າ ມີປະສິດທິພາບບົດຮຽນຄອມພິວເຕີ ມີຄ່າເທົ່າກັບ 83.44/88.60 ສູງກວ່າເກນທີ່ກຳນົດໄວ້ຄື 75/75 ຈຶ່ງຖືວ່າ ມີປະສິດທິພາບຢູ່ໃນລະດັບສູງກວ່າເກນ.

ຜົນສຳເລັດທາງການຮຽນຂອງນັກສຶກສາໃນຈັດການຮຽນ-ການສອນ ວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນເຫັນວ່າ ນັກສຶກສາມີຜົນການຮຽນໂດຍສະເລ່ຍຢູ່ໃນລະດັບດີເລີດ ເຊິ່ງເປັນໄປຕາມສົມມຸດຖານທີ່ກຳນົດໄວ້ ເພາະເປັນການສອນທີ່ນັກສຶກສາສາມາດຮຽນຮູ້ດ້ວຍຕົນເອງ, ນັກສຶກສາ ສາມາດທວນບົດຮຽນຄືນຫຼາຍຮອບໄດ້. ນອກຈາກນີ້, ຍັງເຫັນພາບ, ສຽງ ແລະ ຂັ້ນຕອນຕ່າງໆ ໄດ້ຢ່າງຊັດເຈນເວລາທີ່ຕິດຕາມບົດຮຽນທີ່ຖືກສອນໃນຫ້ອງຮຽນບໍ່ທັນ ຈຶ່ງເປັນສາເຫດເຮັດໃຫ້ນັກສຶກສາມີຜົນສຳເລັດທາງການຮຽນດີ ເຊິ່ງສອດຄ່ອງກັບ ສົມນຶກ (2016) ກ່າວວ່າການພັດທະນາການຮຽນ-ການສອນໂດຍໃຊ້ສື່ Video ເພື່ອເພີ່ມຜົນສຳເລັດທາງການຮຽນເລື່ອງ “ຜະລິດຕະພັນການທ່ອງທ່ຽວ” ສາລັບວິທີການສອນທີ່ໃຊ້ສື່ Video ມີຂໍ້ດີຄື ຊ່ວຍໃຫ້ຄຸນນະພາບຂອງຜູ້ຮຽນດີຂຶ້ນ, ສາມາດຈຳໄດ້ດີ ແລະ ຍາວນານ, ຊ່ວຍໃຫ້ຜູ້ຮຽນມີຄວາມສົນໃຈ ແລະ ມີສ່ວນຮ່ວມໃນຂະບວນການຮຽນຮູ້ ແລະ ມີຜົນສຳເລັດທາງການຮຽນຂອງນັກສຶກສາທີ່ຮຽນໂດຍສື່ Video ສູງກວ່ານັກສຶກສາທີ່ຮຽນປົກກະຕິດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01.

ນັກສຶກສາມີຄວາມເພິ່ງພໍໃຈຕໍ່ກັບການຈັດການຮຽນ - ການສອນວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນ ສຳລັບນັກສຶກສາຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ໂດຍລວມແມ່ນຢູ່ໃນລະດັບເພິ່ງພໍໃຈຫຼາຍ ເມື່ອພິຈາລະນາຕາມລຳດັບຄວາມເພິ່ງພໍໃຈມີຄື ການສອນໂດຍນຳໃຊ້ Video ຊ່ວຍສອນເຮັດໃຫ້ຜູ້ຮຽນໄດ້ຄົ້ນຫາຄວາມຮູ້ດ້ວຍຕົນເອງ, ສາມາດເປັນສື່ການຮຽນເພີ່ມເຕີມນອກໂມງຮຽນໄດ້, ຜູ້ຮຽນສາມາດເຂົ້າເຖິງບົດຮຽນໄດ້ງ່າຍ ແລະ ສະດວກເມື່ອຕິດຕາມການສອນບໍ່ທັນ, ສາມາດສະໜອງຜົນຄວາມກ້າວໜ້າທາງການຮຽນຂອງຜູ້ຮຽນເປັນລາຍບຸກຄົນໄດ້ ແລະ ຜູ້ຮຽນເກີດຄວາມເຂົ້າໃຈໄດ້ດີ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ ສົມນຶກ (2016) ກ່າວວ່າ ການພັດທະນາການຮຽນ-ການສອນໂດຍໃຊ້ສື່ Video ເພື່ອເພີ່ມຜົນສຳເລັດທາງການຮຽນເລື່ອງ “ຜະລິດຕະພັນການທ່ອງທ່ຽວ” ໂດຍພາບລວມ ລະດັບຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການສອນໂດຍໃຊ້ສື່ Video ຢູ່ໃນລະດັບຫຼາຍ ເໝາະສົມທີ່ຈະນຳໄປໃຊ້ຂະບວນການຈັດການຮຽນ-ການສອນໃນຂັ້ນຕໍ່ໄປ ແລະ ສອດຄ່ອງກັບຜົນການສຶກສາຄົ້ນຄວ້າຂອງ ໂພທິພິລົມ (2017) ກ່າວວ່າ ການພັດທະນາບົດຮຽນຄອມພິວເຕີຊ່ວຍສອນທີ່ເນັ້ນເນື້ອໃນອາຊີບ ເພື່ອພັດທະນາທັກສະການອ່ານພາສາອັງກິດເພື່ອຄວາມເຂົ້າໃຈ ສຳລັບນັກຮຽນຊັ້ນມັດທະຍົມສຶກສາ ປີທີ 1 ໂຮງຮຽນເບັນຈັມມາລາຊູທິດ ລາດຊະບູລີ ແຂວງລາດຊະບູລີ ນັກຮຽນມີຄວາມຄິດເຫັນໃນລະດັບດີຕໍ່ບົດຮຽນຄອມພິວເຕີຊ່ວຍສອນ.

## 5. ສະຫຼຸບ

ສ້າງຊຸດການສອນໄດ້ 1 ຊຸດ ເພື່ອປະກອບເຂົ້າໃນການສອນວິຊາຄອມພິວເຕີພື້ນຖານ (Microsoft Excel 2013), ບົດສອນວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້

Video ຊ່ວຍສອນ ສຳລັບນັກສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ມີຄ່າປະສິດທິພາບເທົ່າກັບ 86.89/90.00 ສູງກວ່າເກນທີ່ຕັ້ງໄວ້ຄື 85/85, ຜົນສຳເລັດທາງການຮຽນຂອງນັກສຶກສາໃນຈັດການຮຽນ-ການສອນວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນ ເຫັນວ່າ ນັກສຶກສາມີຜົນການຮຽນໂດຍສະເລ່ຍຢູ່ໃນລະດັບດີເລີດ ແລະ ນັກສຶກສາມີຄວາມເພິ່ງພໍໃຈຕໍ່ກັບການຈັດການຮຽນ-ການສອນວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ Video ຊ່ວຍສອນ ສຳລັບນັກສຶກສາ ຄະນະສຶກສາສາດ ໂດຍລວມມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ຄຳຂອບໃຈ

ການຄົ້ນຄວ້າຄັ້ງນີ້ ປະສົບຜົນສຳເລັດໄດ້ ຍ້ອນການສະໜັບສະໜູນທຶນຈາກ ມະຫາວິທະຍາໄລສຸພານຸວົງ ງົບປະມານປີ 2019. ດັ່ງນັ້ນ, ທີມງານຄົ້ນຄວ້າພວກຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈເປັນຢ່າງສູງມາຍັງການນຳຂອງ ມະຫາວິທະຍາໄລສຸພານຸວົງ ທີ່ໃຫ້ໂອກາດ ແລະ ໃຫ້ທຶນຄົ້ນຄວ້າໃນຄັ້ງນີ້.

## 8. ເອກະສານອ້າງອີງ

ກະຊວງສຶກສາທິການ. (2001). *ແຜນຍຸດທະສາດການສຶກສາ 20 ປີ (2001 - 2020), 10 ປີ (2001 - 2010) ແລະ ແຜນການພັດທະນາການສຶກສາ 5 ປີ ຄັ້ງທີ V (2001 - 2005.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ .

ກົມສ້າງຄູ. (2019). *ຫຼັກສູດສ້າງຄູມັດທະຍົມ ລະດັບປະລິນຍາຕີສອນ (ສອນໄດ້ແຕ່ ມ.1 - ມ.7).* ນະຄອນຫຼວງວຽງຈັນ: ສູນພັດທະນາຄູ ແລະ ກົມສ້າງຄູ.

ສຸວັນນ້ອຍ. (2548). ການປະຍຸກໃຊ້ອິນເທີເນັດໃນໂຮງຮຽນ. *ວາລະສານສຶກສາສາດ ມຂ*, 40 - 46.

ສົມນຶກ. (2016). ການພັດທະນານະວັດຕະກາການຮຽນ-ການສອນໂດຍໃຊ້ສື່ວິດີທັດເພື່ອເພີ່ມປະສິດທິ ພາບການຮຽນເລື່ອງ "ຜະລິດຕະພັນການທ່ອງທ່ຽວ ". *ວາລະສານວິຊາການທ່ອງທ່ຽວໄທນານາຊາດ.*

ບຸນຊົມ ສີສະອາດ. (2011). *ການວິໄຈເບື້ອງຕົ້ນ* (ພິມເທື່ອທີ 9). ກຸງເທບ: ຊົມລົມເດັກ.

ໂພທິພິລົມ ກະມົນພັດ. (2017). ການພັດທະນາບົດຮຽນຄອມພິວເຕີຊ່ວຍສອນທີ່ເນັ້ນເນື້ອໃນອາຊຽນ ເພື່ອພັດທະນາທັກສະການອ່ານພາສາອັງກິດເພື່ອຄວາມເຂົ້າໃຈ ສຳຫຼັບນັກຮຽນຊັ້ນມັດທະຍົມສຶກສາ ປີທີ 1 ໂຮງຮຽນເບັນຈັມມາລາຊູທິດ ລາດຊະບູລີ ແຂວງລາດຊະບູລີ. *ມະຫາວິທະຍາໄລ ສິລະປະກອນ.*

ໄພສານ ຫວັງພານິດ. (1985). *ການວັດການສຶກສາ.* ກຸງເທບ: ໄທວັດທະນາພານິດ.

ວິລະຍຸດ ວິຊຽນໂຊດ. (2000). *ຈິດຕະວິທະຍາການສອນແບບສືບສວນສອບສວນ.* ກຸງເທບ: ອຳນວຍການພິມ.

ອານົນ ກະບອກໂທ. (2002). *ຄວາມເພິ່ງພໍໃຈຂອງນັກສຶກສາວິຊາທະຫານທີ່ມີຕໍ່ການຝຶກວິຊາທະຫານໃນໜ່ວຍຝຶກນັກສຶກສາວິຊາທະຫານໃນແຂວງສຸກົນນະຄອນ ປີການສຶກສາ 2000.* ມະຫາສາລະຄາມ: ມະຫາສາລະຄາມ.

Jonassen, D. (1992). *Evaluating constructivist learning.* T.M Duffy: New Jersey: Lawrence Erlbaum Associates Publishers.

Myers M. Scott. (1971). *Every employer a manager: More meaningful work through job environment.* New York: McGraw-hill Book Company.

Sornprapussorn. (2559). *ວິດີທັດເພື່ອການສຶກສາ.* Retrieved from sornprapussorn.blogspot.com

**ຕາຕະລາງ 1: ປະສິດທິພາບຂອງບົດສອນ ($E_1/E_2$)**

| ນັກສຶກສາ | ທົດສອບ 1 | ທົດສອບ 2 | ລວມທົດສອບ 2 ຄັ້ງ | ທົດສອບຫຼັງຮຽນ |
|---|---|---|---|---|
| 19 | 100 ຄະແນນ | 100 ຄະແນນ | 200 ຄະແນນ | 100 ຄະແນນ |
| ລວມ | 1,560 | 1,742 | 3,302 | 1,710 |
| ເປີເຊັນ | 82.10 | 91.68 | 86.89 | 90.00 |
| ປະສິດທິພາບຂອງບົດສອນ $E_1$ / $E_2$ ເທົ່າ 86.89 / 90.00 | | | | |

**ຕາຕະລາງ 2: ສະເລ່ຍຂອງຜົນການຮຽນວິຊາຄອມພິເຕີພື້ນຖານໂດຍນໍາໃຊ້ Video ຊ່ວຍສອນ**

| ລໍາດັບ | ຄະແນນຄັ້ງທີ 1 | ຄະແນນຄັ້ງທີ 2 | ຄະແນນຄັ້ງທີ 3 | ຄະແນນສະເລ່ຍ | ລະດັບຄະແນນ |
|---|---|---|---|---|---|
| ຄະແນນສະເລ່ຍລວມທັງໝົດ | | | | 87.93 | ດີເລີດ |

**ຕາຕະລາງ 3: ຄວາມເພິ່ງພໍໃຈຂອງນັກສຶກສາ ຕໍ່ກັບການຈັດການຮຽນ-ການສອນ ວິຊາຄອມພິວເຕີພື້ນຖານ ໂດຍນໍາຊ້ Video ຊ່ວຍສອນ**

| ລ/ດ | ເນື້ອໃນລາຍການ | ຄ່າສະເລ່ຍ ($\overline{X}$) | ຄ່າຜັນປ່ຽນມາດຖານ (S.D) | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| ສະເລ່ຍລວມທັງໝົດ | | 4.08 | 0.84 | ພໍໃຈຫຼາຍ |